# ການເຮັດນ້ຳໝັກຈຸລິນຊີຈາກສັດ

ນ້ຳໝັກຈຸລິນຊີຈາກສັດ ເຊັ່ນ: ກຸ້ງ, ຫອຍ, ປູ, ປາ, ພົກນ້ອຍໝູ, ຂີ້ກະເດືອນ...ນັບວ່າເປັນແຫລ່ງໂປຣຕີນຊັ້ນດີ ຕົ້ນທຶນຕ່ຳ ນຳໃຊ້ໃນການລ້ຽງໝູຫລຸມຈະຊ່ວຍໃນການຈະເລີນເຕີບໂຕໄວຂື້ນ.

## ວັດສະດຸ ແລະ ອຸປະກອນ

1. ໂຖແກ້ວ ຫລື ພາສຕິກປາກກວ້າງ;
2. ກຸ້ງ, ຫອຍ, ປູ, ປາ, ພົກນ້ອງໝູ, ຂີ້ກະເດືອນ ຢ່າງໃດຢ່າງໜຶ່ງ ຫລື ລວມກັນກໍ່ໄດ້;
3. ນ້ຳຕານຊາຍແດງ.









## ອັດຕາສ່ວນ

ສັດຕ່າງໆ 1 ກລ. ຕໍ່ນ້ຳຕານຊາຍແດງ 1 ກລ.

## ຂັ້ນຕອນ ແລະ ວິທີການເຮັດ

1. ສັບຊີ້ນສ່ວນສັດໃຫ້ມີຂະໜາດ 2-4 ຊມ.
2. ນຳຊີ້ນສ່ວນສັດທີ່ສັບແລ້ວໄປກອງລວມກັນ ໂຮຍນ້ຳຕານໃສ່ໃຫ້ທົ່ວໃຊ້ມືປະສົມເຂົ້າກັນ.
3. ນຳໄປໃສ່ລົງໂຖ ໃຫ້ໃສ່ປະມານ 2/3 ຂອງໂຖ ປິດຝາໃຫ້ແໜ້ນ.
4. ໃຊ້ໄມ້ຄົນມື້ລະ 1-2 ເທື່ອ (ປິດຝາໃຫ້ແໜ້ນທຸກເທື່ອຫລັງຄົນ).
5. ໝັກໄວ້ໃນບ່ອນຮົ່ມ 15 ມື້ ເມື່ອຄົບກຳນົດໃຫ້ຮ່າຍເອົານ້ຳໃສ່ຂວດຢາງໃນປະມານ 2/3 ຂອງຂວດປິດຝາໄວ້ໃນບ່ອນຮົ່ມ ຫລື ນຳໄປໃຊ້.








## ອັດຕາການໃຊ້

ນ້ຳໝັກຈາກສັດ 2 ບ່ວງແກງຕໍ່ນ້ຳ 10 ລິດ ຄວນໃຊ້ໃຫ້ໝົດພາຍໃນ 45 ມື້.

## ຄຸນປະໂຫຍດ

1. ປະສົມອາຫານສັດ ເພີ່ມແຫລ່ງໂປຣຕີນ ຊ່ວຍເລັ່ງການຈະເລີນເຕີບໂຕ.
2. ໃຊ້ປະສົມກັບນ້ຳໝັກຊະນິດອື່ນໆ ທົດຄອກສັດເສີມສ້າງການເຮັດວຽກຂອງເຊື້ອຣາຂາວ.
3. ທົດຕົ້ນໄມ້ ຊ່ວຍໃນການແຕກດອກອອກໝາກ.
4. ທົດກອງປຸ໋ຍໝັກ ຊ່ວຍເພີ່ມທາດອາຫານ
5. ກາກທີ່ເຫລືອນຳໄປລ້ຽງໝູ ໂດຍປະສົມຮຳອ່ອນໃນອັດຕາ 1 : 10 ຄົນໃຫ້ເຂົ້າກັນທົດ ທົດດ້ວຍນ້ຳຈຸລິນຊີ 7x2 (7 ຊະນິດໆ ລະ 2 ບ່ວງ) ປະສົມນ້ຳ 10 ລິດ.